ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ດັກລັກ ຣັບເບີ ຈໍາກັດ

DAKLAORUCO

ເລກທີ: 317 /ຈກ.ບສ

*ປາກເຊ, ວັນທີ 22 ເດືອນ 06 ປີ 2024*

# ແຈ້ງການ

## ເລື່ອງ: ນະໂຍບາຍການເຂົ້າຮ່ວມກອງທຶນປະກັນສັງຄົມແຫ່ງຊາດສໍາລັບຜູ້ອອກແຮງງານລາວ

ອີງຕາມກົດໝາຍແຮງງານແຫ່ງປະເທດ ສ.ປ.ປ.ລາວ, ລົງວັນທີ 24 ທັນວາ ປີ 2013;

ອີງຕາມກົດໝາຍປະກັນສັງຄົມແຫ່ງຊາດລາວ(ສະບັບປັບປຸງ) ປີ 2018;

ອີງຕາມຄໍາແນະນໍາຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2751/ຮສສ, ລົງວັນທີ 24 ກໍລະກົດ 2015 ແລະ ເລກທີ 1206/ຮສສ, ລົງວັນທີ 23/04/2019 ເລື່ອງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປະກັນສັງຄົມ (ສະບັບປັບປຸງ);

ອີງຕາມຂໍ້ຕົກລົງ ສະບັບເລກທີ 2362/ກຊຮງ, ລົງວັນທີ 11/07/2018 ເລື່ອງຂັ້ນເງິນເດືອນສົມທົບກອງທຶນປະກັນສັງຄົມແຫ່ງຊາດ;

ອີງຕາມແຈ້ງການສະບັບເລກທີ 3226/ຮສສ, ລົງວັນທີ 01/09/2023 ເລື່ອງການປັບຂັ້ນເງິນເດືອນຕໍ່າສຸດຂອງຜູ້ອອກແຮງງານຢູ່ປະເທດ ສປປ ລາວ;

ອີງຕາມສະພາບການຕົວຈິງຂອງບໍລິສັດ.

ດັ່ງນັ້ນ, ອໍານວຍການບໍລິສັດດັກລັກຣັບເບີຈໍາກັດ ຈຶ່ງໄດ້ປະກາດແຈ້ງການ ເຊິ່ງມີເນື້ອໃນລະອຽດດັ່ງລຸ່ມນີ້:

**1. ຂໍ້ກໍານົດລວມ:**

- ສໍາລັບກໍາມະກອນ:

ລະດັບເງິນເດືອນປະກັນຕົນໃນການເຂົ້າຮ່ວມ ກອງທຶນປະກັນສັງຄົມທີ່ນໍາໃຊ້ສໍາລັບກໍາມະກອນ ຄົນລາວຂັ້ນຕໍ່າສຸດແມ່ນ 1.600.000 ກີບ/ຄົນ/ເດືອນ. ໝາຍຄວາມວ່າໃນນັ້ນ: ຜູ້ໃຊ້ແຮງງານສົມທົບຊ່ວຍ 6% (96.000 ກີບ) ແລະ ຜູ້ອອກແຮງງານສົມທົບເອງ 5,5% (88.500 ກີບ).

-ສໍາລັບພະນັກງານ:

\+ ຕໍາແໜ່ງພະນັກງານວິຊາການຖອກສົມທົບຂັ້ນ: 2.500.000 ກີບ/ຄົນ/ເດືອນ. ໃນນັ້ນ: ຜູ້ໃຊ້ແຮງງານສົມທົບຊ່ວຍ 6% (150.000 ກີບ) ແລະ ຜູ້ອອກແຮງງານສົມທົບເອງ 5,5% (137.500 ກີບ).

\+ ຕໍາແໜ່ງນັບແຕ່ຫົວໜ້າຈຸຂຶ້ນໄປຖອກສົມທົບຂັ້ນ: 3.000.000 ກີບ/ຄົນ/ເດືອນ. ໃນນັ້ນ: ຜູ້ໃຊ້ແຮງງານສົມທົບຊ່ວຍ 6% (180.000 ກີບ) ແລະ ຜູ້ອອກແຮງງານສົມທົບເອງ 5,5% (165.500 ກີບ).

*(ອັດຕາຖອກສົມທົບແມ່ນປະຕິບັດຕາມຂໍ້ຕົກລົງ ສະບັບເລກທີ 2362/ກຊຮງ, ລົງວັນທີ 11/07/2018 ເລື່ອງຂັ້ນເງິນເດືອນສົມທົບກອງທຶນປະກັນສັງຄົມແຫ່ງຊາດ ແລະ ແຈ້ງການສະບັບເລກທີ 3226/ຮສສ, ລົງວັນທີ 01/09/2023 ເລື່ອງການປັບຂັ້ນເງິນເດືອນຕໍ່າສຸດຂອງຜູ້ອອກແຮງງານຢູ່ປະເທດສປປ ລາວ ທີ່ລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມວາງອອກ).*

**2. ສິດຜົນປະໂຫຍດຂອງຜູ້ອອກແຮງງານເມື່ອສົມທົບເຂົ້າຮ່ວມກອງທຶນປະກັນສັງຄົມແຫ່ງຊາດ:**

ຜູ້ອອກແຮງງານທີ່ເຂົ້າຮ່ວມກອງທຶນປະກັນສັງຄົມຈະໄດ້ຮັບອຸດໜູນ ແລະ ບັນດາຜົນປະໂຫຍດ ຕ່າງໆ ເຊິ່ງແມ່ນອົງການປະກັນສັງຄົມແຫ່ງຊາດລາວເປັນຜູ້ຮັບຜິດຊອບໃນການຈ່າຍອຸດໜູນຕ່າງໆຕາມທີ່ໄດ້ລະບຸໄວ້ໃນລະບຽບການຂອງກົດໝາຍປະກັນສັງຄົມລາວ. ໂດຍມີລາຍລະອຽດດັ່ງນີ້:

**2.1. ອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ ຫຼື ອຸປະຕິເຫດອື່ນ:**

- ຜູ້ອອກແຮງງານເຂົ້າຮ່ວມກອງທຶນປະກັນສັງຄົມແຕ່ 1 ເດືອນຂຶ້ນໄປຈະໄດ້ຮັບອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບຄືດັ່ງລຸ່ມນີ້:

+ ບໍລິການປິ່ນປົວ ໂດຍບໍ່ຈຳກັດວົງເງິນ ແລະ ຈຳນວນຄັ້ງປິ່ນປົວ;

+ ໃນກໍລະນີຕ້ອງພັກວຽກຊົ່ວຄາວ ສຳລັບຜູ້ປະກັນຕົນທີ່ປະສົບ ອຸປະຕິເຫດແຮງງານ ຫຼື ພະຍາດ ອາຊີບ ຈະໄດ້ຮັບອຸດໜູນເສັຍກຳລັງແຮງງານຊົ່ວຄາວເທົ່າກັບ 70% ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ ຈ່າຍໃນຄັ້ງທຳອິດແມ່ນສູງງສຸດບໍ່ເກີນ 6 ເດືອນ.

+ ໃນກໍລະນີຜູ້ເສັຍກຳລັງແຮງງານຊົ່ວຄາວທີ່ໄດ້ຮັບເງິນອຸດໜູນໃນງວດທຳອິດຄົບ 6 ເດືອນແລ້ວຫາກຍັງບໍ່ສາມາດຕີລາຄາເປັນເສັຍອົງຄະ ກໍ່ໃຫ້ໄປກວດສຸຂະພາບຄືນໃໝ່ ໂດຍມີການຢັ້ງຢືນດ້ານການແພດ ເພື່ອສືບຕໍ່ຮັບອຸດໜູນເສັຍກຳລັງແຮງງານຊົ່ວຄາວເທົ່າກັບ 60% ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ ຈ່າຍສູງສຸດບໍ່ເກີນ 6 ເດືອນ ເປັນໄລຍະການຈ່າຍຄັ້ງສຸດທ້າຍ.

+ ຖ້າວ່າແພດຫຼືໂຮງໝໍຢັ້ງຢືນວ່າເສຍອົງຄະລະດັບ 40% ແມ່ນຈະໄດຮັບເງິນອຸດໜູນເສຍອົງຄະ ເທື່ອດຽວ ແລະ ຖ້າລະດັບເສຍອົງຄະແຕ່ 41% ຂຶ້ນໄປແມ່ນຈະໄດ້ຮັບເງິນອຸດໜູນເສຍອົງຄະເປັນ ລາຍເດືອນ, ໄດ້ຮັບອຸປະກອນ ຫຼື ອົງຄະທຽມຕາມລະບຽບການ. ໃນກໍລະນີລະດັບເສຍອົງຄະແຕ່ 81% ຂຶ້ນໄປແມ່ນຈະໄດ້ຮັບເງິນອຸດໜູນຜູ້ດູແລ.

+ ໄດ້ຮັບເງິນອຸດໜູນເສຍຊີວິດ.

- ສຳລັບອຸປະຕິເຫດອື່ນ ທີ່ບໍ່ແມ່ນອຸປະຕິເຫດແຮງງານ ແມ່ນຕ້ອງຖອກເງິນສົມທົບ 12 ເດືອນ ຂຶ້ນໄປຈຶ່ງຈະໄດ້ຮັບອຸດໜູນເສຍອົງຄະ.

*ຄິດໄລ່ອຸດໜູນແມ່ນໄລ່ຕາມຄຳແນະນຳຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2751/ຮສສ, ລົງວັນທີ 24 ກໍລະກົດ 2015 ແລະ ເລກທີ 1206/ຮສສ, ລົງວັນທີ 23/04/2019 ເລື່ອງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປະກັນສັງຄົມ (ສະບັບປັບປຸງ).*

**2.2. ອຸດໜູນປະກັນສຸຂະພາບ:**

ຜູ້ປະກັ ຕົ ຖອກເງິ ສົມທົບເຂົ້າກອງທຶ ໄດ້ 03 ເດືອ ຂຶ້ ໄປຈະໄດ້ສິດປິ່ ປົວສຸຂະພາບຄື :

+ ສາມາດນຳໃຊ້ບັດປະກັນສັງຄົມເຂົ້າຮັບການປິ່ນປົວສຸຂະພາບລວມທັງຄູ່ສົມຣົດ ແລະ ລູກທີ່ມີອາຍຸຕໍ່າກວ່າ 18 ປີ ແລະ ລູກຕ້ອງບໍ່ທັນສ້າງຄອບຄົວ ໂດຍບໍ່ຈຳກັດວົງເງິນ ແລະ ຈຳນວນຄັ້ງໃນການປິ່ນປົວ. ການນຳໃຊ້ບັດປະກັນສັງຄົມ ຕ້ອງນຳໃຊ້ຄຽງຄູ່ກັບ ບັດປະຈຳຕົວ ຫລື ປຶ້ມສຳມະໂນຄົວ.

+ ກໍລະນີເຈັບສຸກເສີນຍ້ອນອຸປະຕິເຫດ ຫຼື ພະຍາດໃດໜຶ່ງ: ສາມາດເຂົ້າຮັບການປິ່ນປົວຢູ່ໂຮງໝໍ ທີ່ໄກ້ສຸດ ແລະ ໃຫ້ແຈ້ງມາຍັງໂຮງໝໍ ທີ່ຕົນເລືອກ ຫຼື ແຈ້ງໃຫ້ປະກັນສັງຄົມຮັບຮູ້ພາຍໃນ 72 ຊົ່ວໂມງ ຫຼື 03 ວັນ. ເມື່ອມີອາການດີຂຶ້ນກໍ່ຕ້ອງອອກຈາກໂຮງໝໍທີ່ກ່ຽວຂ້ອງເພື່ອໄປໃຊ້ບໍລິການປິ່ນປົວສຸຂະພາບຕໍ່ຢູ່ໂຮງໝໍທີ່ຕົນເລືອກ.

+ ໃນກໍລະນີຜູ້ປະກັນຕົນຫາກເສັຍຊີວິດ ຫຼື ຢຸດຈ່າຍເງິນສົມທົບນັ້ນ ຜົວ ຫຼື ເມັຍ ແລະ ລູກ ຂອງຜູ້ກ່ຽວຈະຍັງໄດ້ຮັບການອຸດໜູນປິ່ນປົວສຸຂະພາບ ໃນໄລຍະ 3 ເດືອນຖັດມາ ນັບແຕ່ມື້ຜູ້ປະກັນຕົນ ໄດ້ເສຍຊີວິດ ຫຼື ຢຸດຈ່າຍເງິນສົມທົບເປັນຕົ້ນໄປ.

**2.3. ອຸດໜູນອອກລູກ ຫຼື ຫຼູລູກ:**

- ຖອກເງິນສົມທົບເຂົ້າກອງທຶນ 01 ເດືອນຂຶ້ນໄປສາມາດຮັບການຝາກທ້ອງ ແລະ ອອກລູກໂດຍບໍ່ເສຍຄ່າ ຢູ່ໂຮງໝໍທີ່ເລືອກ.

- ຜູ້ປະກັນຕົນ ຖອກເງິນສົມທົບ 6 ເດືອນ ແລະ ຖືພາ 02 ເດືອນຂຶ້ນໄປ, ເມື່ອອອກລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງ ຈະໄດ້ຮັບເງິນບຳເນັດ 60% ຂອງເງິນເດືອນປະກັນຕົນຕໍ່ລູກ 01 ຄົນ ກໍລະນີລູກແຝດແມ່ນຄູນຕາມຈຳນວນ. ສະເພາະຜູ້ປະກັນຕົນຊາຍ ທີ່ເມຍບໍ່ແມ່ນຜູ້ປະກັນຕົນ ຈະໄດ້ຮັບເງິນບຳເນັດລູກເຊັ່ນກັນ).

- ໃນກໍລະນີຜູ້ປະກັນຕົນເພດຍິງຖອກເງິນສົມທົບປະກັນສັງຄົມບໍ່ທັນຄົບ 6 ເດືອນຕາມເງື່ອນ ແມ່ນຈະໄດ້ຮັບເງິນອຸດໜູນເກີດລູດຄັ້ງດຽວເທົ່າ 60% ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍ.

ຕົວຢ່າງ: ທ້າວ/ນາງ ຂ ມີເງິນເດືອນປະກັນຕົນສະເລ່ຍ 6ເດືອນສຸດທ້າຍເທົ່າກັບ 1.600.000 ກີບ.

ການຄິດໄລ່: 1.600.000 ກີບ x 60%= 960.000 ກີບ/ຄົນ/ຄັ້ງ

- ຜູ້ປະກັນຕົນຈ່າຍເງິນສົມທົບ 09 ເດືອນຂຶ້ນໄປຈະໄດ້ຮັບເງິນອຸດໜູນອອກລູກ 80% ຂອງເງິນເດືອນປະກັນຕົນ ຄິດໄລ່ໃຫ້ 3,5 ເດືອນ(105ມື້) ແລະ ຮັບເງິນອຸດໜູນບຳເນັດລູກ 60% ຕໍ່ລູກ 01 ຄົນ.

ຕົວຢ່າງ: ນາງ ຂໍ ມີເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍເທົ່າກັບ 1.600.000 ກີບ.

ການຄິດໄລ່: 1.600.000 ກີບ x 80%= 1.280.0000 ກີບ/ເດືອນ

**2.4. ອຸດໜູນປ່ວຍການ:**

- ຖອກເງິນສົມທົບກອງທຶນ 03 ເດືອນຂຶ້ນໄປ; ເມື່ອຫາກໄດ້ພັກວຽກຍ້ອນເຈັບປ່ວຍ ໂດຍມີການຢັ້ງຢືນຈາກແພດ ຈະໄດ້ຮັບເງິນອຸດໜູນປ່ວຍການດັ່ງນີ້:

+ ໄລຍະທີ1: ຈະໄດ້ຮັບເງິນອຸດໜູນ 70% ຂອງເງິນເດືອນປະກັນຕົນຈ່າຍສູງສຸດບໍ່ເກີນ 6 ເດືອນ.

+ ຖ້າຜູ້ກ່ຽວຫາກສືບຕໍ່ປິ່ນປົວ ໃຫ້ຄິດໄລ່ 60% ຂອງເງິນເດືອນປະກັນຕົນ ແຕ່ຈ່າຍສູງສຸດບໍ່ເກີນ 6 ເດືອນເປັນໄລຍະສຸດທ້າຍ.

*(ການຄິດໄລ່ເງິນອຸດໜູນແມ່ນອີງຕາມ ຄຳແນະນຳຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2751/ຮສສ, ລົງວັນທີ 24 ກໍລະກົດ 2015 ແລະ ເລກທີ 1206/ຮສສ, ລົງວັນທີ 23/04/2019 ເລື່ອງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປະກັນສັງຄົມ (ສະບັບປັບປຸງ)).*

**2.5. ອຸດໜູນບຳນານ:**

- ຜູ້ປະກັນຕົນຖອກເງິນສົມທົບກອງທຶນແຕ່ 15 ປີ (180 ເດືອນ) ຂຶ້ນໄປ ມີກະສຽນອາຍຸ 60 ປີ ສຳລັບເພດຊາຍ ແລະ 55 ປີ ສຳລັບເພດຍິງ ແມ່ນຈະໄດ້ຮັບເງິນບຳນານແຕ່ລະເດືອນ.

*(ສຳລັບຜູ້ທີ່ເຂົ້າປະກັນສັງຄົມກ່ອນວັນທີ 01/10/2014 ມີປີປະກັນຕົນຢ່າງໜ້ອຍ 05 ປີ ຫລື 60 ເດືອນຂຶ້ນໄປ ແລະ ອາຍຸຮອດກະສຽນບຳນານກໍ່ສາມາດຮັບບຳນານແຕ່ລະເດືອນໄດ້).*

- ໃນກໍລະນີຜູ້ປະກັນຕົນໄດ້ເຖິງກະສຽນອາຍຸບຳນານ ແລະ ຖອກເງິນສົມທົບກອງທຶນຮອດ 12 ເດືອນ ແຕ່ບໍ່ຄົບ 15 ປີ ແມ່ນຈະໄດ້ຮັບອຸດໜູນຄັ້ງດຽວ. ສຳລັບຜູ້ທີ່ຄົບເງື່ອນໄຂຮັບບຳນານບໍ່ສາມາດຮັບເງິນອຸດໜູນບຳເນັດເທື່ອດຽວ).

*ການຄິດໄລ່ເງິນບຳນານແມ່ນອີງຕາມຄຳແນະນຳຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2751/ຮສສ, ລົງວັນທີ 24 ກໍລະກົດ 2015 ແລະ ເລກທີ 1206/ຮສສ, ລົງວັນທີ 23/04/2019 ເລື່ອງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປະກັນສັງຄົມ (ສະບັບປັບປຸງ).*

**2.6. ອຸດໜູນເສຍຊີວິດ:**

- ເງື່ອນໄຂໄດ້ຮັບອຸດໜູນເສຍຊີວິດ:

+ ຈ່າຍເງິນສົມທົບ 01 ເດືອນ, ເສຍຊີວິດຍ້ອນອຸປະຕິເຫດແຮງງານ.

+ ຈ່າຍເງິນສົມທົບ 03 ເດືອນຂຶ້ນໄປ ເສຍຊີວິດຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ.

+ ຖ້າມີການເສຍຊີວິດ ຕ້ອງມີໜັງສືຢັ້ງຢືນຕາມລະບຽບການ.

- ປະຕິບັດຄົບເງື່ອນໄຂຈະໄດ້ຮັບອຸດໜູນດັ່ງລຸ່ມນີ້:

+ ຮັບເງິນຊາປະນະກິດສົບ:

- ເມື່ອຜູ້ປະກັນຕົນເສຍຊີວິດ ຄອບຄົວຈະໄດ້ອຸດໜູນຊາປະນະກິດສົບ ເທົ່າ 15 ເດືອນຂອງເງິນປະກັນຕົນ.
- ເມື່ອທັງຜົວ ແລະ ເມຍ ລ້ວນແຕ່ຖອກເງິນສົມທົບກອງທຶນ ແລະ ຈາກນັ້ນມີ ຜູ້ໃດຜູ້ໜຶ່ງເສຍຊີວິດແມ່ນຈະໄດ້ຮັບອຸດໜູນຊາປະນະກິດສົບເທົ່າ 15 ເດືອນເງິນປະກັນຕົນຂອງ ຜູ້ເສຍຊີວິດ.
- ເມື່ອຜົວ ຫຼື ເມຍຂອງຜູ້ເຂົ້າຮ່ວມກອງທຶນປະກັນສັງຄົມ ຫາກເສຍຊີວິດແມ່ນ ຈະໄດ້ຮັບອຸດໜູນຊາປະນະກິດສົບເທົ່າ 6 ເດືອນເງິນປະກັນຕົນ.
- ເມື່ອລູກອາຍຸຕໍ່າກວ່າ 18 ປີ ຂອງຜູ້ປະກັນຕົນໄດ້ເສຍຊີວິດ ແມ່ນຈະໄດ້ຮັບອຸດໜູນ ຊາປະນະກິດສົບເທົ່າ 03 ເດືອນເງິນປະກັນຕົນ.

+ ສຳລັບຜູ້ທີ່ເຂົ້າຮ່ວມກອງທຶນແຕ່ 05 ປີຂຶ້ນໄປ ເມື່ອເສຍຊີວິດ ຜົວ ຫຼື ເມຍ ຫຼື ລູກ, ແມ່, ພໍ່ ທີ່ບໍ່ມີວຽກເຮັດງານທຳ ບໍ່ມີລາຍຮັບ ຂອງຜູ້ປະກັນຕົນຈະໄດ້ຮັບອຸດໜູນຄອບຄົວ ເປັນລາຍເດືອນ ດ້ວຍເງື່ອນໄຂຕ່າງໆທີ່ໄດ້ລະບຸໄວ້ໃນຄຳແນະນຳ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 2751/ຮສສ, ລົງວັນທີ 24/07/2015.

**2.7. ອຸດໜູນວ່າງງານ:**

-ຖອກເງິນສົມທົບກອງທຶນ 12 ເດືອນຂຶ້ນໄປຈະໄດ້ຮັບອຸດໜູນວ່າງງານເທົ່າ 60% ຂອງເງິນເດືອນປະກັນຕົນ ສະເລ່ຍ 06 ເດືອນສຸດທ້າຍກ່ອນການວ່າງງານ ເງິນອຸດໜູນດັ່ງກ່າວຈະໄດ້ຮັບສູງສຸດບໍ່ ເກີນ 12 ເດືອນ. ໂດຍມີ ເງື່ອນໄຂວ່າ ຕ້ອງວ່າງງານ 30 ວັນຂຶ້ນໄປໂດຍມີການຢັ້ງຢືນຈາກຫົວໜ່ວຍແຮງງານ ຈຶ່ງໄດ້ຮັບເງິນອຸດໜູນວ່າງງານດັ່ງກ່າວ.

- ໃນກໍລະນີທີ່ບໍ່ໄດ້ຮັບອຸດໜູນວ່າງງານແມ່ນ:

+ ເຮັດຜິດກົດລະບຽບ ຜິດສັນຍາແຮງງານ ແລະ ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານ.

+ ລາອອກດ້ວຍຄວາມສະໝັກໃຈ.

**3.** ມອບໜ້າທີ່ໃຫ້ຫ້ອງການ ປະສານສົມທົບກັບອຳນວຍການແຕ່ລະໜ່ວຍງານ ເຜີຍແຜ່ຂໍ້ກຳ ນົດ ກ່ຽວກັບການເຂົ້າຮ່ວມກອງທຶນປະກັນສັງຄົມໃຫ້ທົ່ວເຖິງກຳມະກອນທຸກຄົນ.

ດັ່ງທີ່ໄດ້ກ່າວມານັ້ນແມ່ນ ບາງຂໍ້ກຳນົດຕາມລະບຽບກົດໝາຍແຫ່ງ ສ.ປ.ປ.ລາວ ວ່າດ້ວຍການປະກັນສັງຄົມ. ຂໍໃຫ້ບັນດາຫ້ອງການຕ່າງໆຕ່າງທີ່ກ່ຽວຂ້ອງ ແລະ ບັນດາໜ່ວຍງານຕ່າງໆ ພ້ອມອ້າຍນ້ອງກຳມະກອນທຸກຄົນຈົ່ງພ້ອມກັນນຳໄປຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ອຳນວຍການບໍລິສັດ**

ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັອບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

Nguyễn Đức Hạnh

***ບ່ອນນຳສົ່ງ:***

- ຄະນະອຳນວຍການບ/ສ;
- ຫ້ອງການບ/ສ;
- ໜ່ວຍງານ;
- ສຳເນົາ: ຂາອອກ-ຂາເຂົ້າ